ນ້ອງໆເດັກອາສາຮຸ່ນນ້ອຍໄປທັດສະນາສຶກສາຢູ່ຫາດດອນຈັນ



ສະຫລຸບສົກຮຽນ 2007-2008






# ປຶ້ມຄູ່ມື
# ກ່ຽວກັບລະບົບຂອງ
# "ອ.ຮ.ພ"

ອາສາສະໝັກເພື່ອນຊ່ວຍເພື່ອນຕ້ານສິ່ງເສບຕິດໃນໂຮງຮຽນ

(ສະບັບທົດລອງ)

ຮົບໂຮມ ແລະ ຮຽບຮຽງໂດຍ: ອຈ ໂພໄຊ ຈັນທະວົງສາ
ອຈ ສິງຄຳ ນາລິນ
ອຈ ທຸມພັນ ຄຳມະນີວົງ
ບັນນາທິການໂດຍ: ອຈ ໂພໄຊຈັນທະວົງສາ
ພິມ ແລະ ຈັດໜ້າ: ນ ມະນີວັນ ສີພອນໄຊ
ອອກແບບໜ້າປົກໂດຍ: ທ ວັດທະນາ ສີວິໄຊ

ສູນອົບຮົມຮ່ວມພັດທະນາ

2008

ເດັກອາສາຮຸ່ນໃຫຍ່ກຳລັງຟ້ອນ




ເດັກອາສາຮຸ່ນກາງກຳລັງເກັບຫອຍອອກຈາກທົ່ງນາ



www.padetc.org

# ຄຳປະຕິຍານຂອງ "ອ.ຣ.ພ"

**v** ເດັກອາສາຮຸ່ນໃຫຍ່ ແລະ ຮຸ່ນກາງ:

1. ຂ້າພະເຈົ້າຈະອຸທິດຕົນເພື່ອຊາດ ແລະປະຊາຊົນບັນດາເຜົ່າ.
2. ຂ້າພະເຈົ້າຈະຊ່ວຍເຫຼືອຜູ້ອື່ນສະເໝີ.
3. ຂ້າພະເຈົ້າເຊື່ອ ແລະ ປະຕິບັດຕາມກົດລະບຽບຂອງ ອ.ຣ.ພ.

**v** ເດັກອາສາຮຸ່ນນ້ອຍ:

1. ຂ້ານ້ອຍຈະເປັນເດັກດີຂອງພໍ່ແມ່ ແລະ ຄູ - ອາຈານ.
2. ຂ້ານ້ອຍຈະຊ່ວຍເຫຼືອຜູ້ອື່ນສະເໝີ
3. ຂ້ານ້ອຍເຊື່ອ ແລະ ປະຕິບັດຕາມກົດລະບຽບ ຂອງ ອ.ຣ.ພ.





# ຄຳນຳ

ປື້ມຄວາມຮູ້ກ່ຽວກັບການເຮັດວຽກຂອງອາສາສະໝັກຮ່ວມພັດທະນາເພື່ອນຊ່ວຍເພື່ອນຕ້ານສິ່ງເສບຕິດໃນໂຮງຮຽນ (ອ.ຣ.ພ) ເຫລັ້ມນີ້ແມ່ນການຂຽນ ແລະ ຮີບໂຮມໂດຍ ອຈ ໂພໄຊ ຈັນທະວົງສາ ຊຶ່ງ ຂຽນຂຶ້ນໂດຍມີຈຸດປະສົງໃຫ້ຜູ້ຮ່ວມງານຮູ້ເຖິງວິທີການເຮັດວຽກຂອງ " ອ.ຣ.ພ " ເດັກອາສາສະໝັກ ຮ່ວມພັດທະນາເພື່ອນຊ່ວຍເພື່ອນຕ້ານສິ່ງເສບຕິດໃນໂຮງຮຽນ ແລະໄດ້ຄັດມາຈາກປື້ມຄູ່ມື ອ.ຣ.ພ ທີ່ໄດ້ຮັບການອະນຸມັດຈາກກະຊວງສຶກສາທິການແລ້ວ.

ຄະນະຈັດທຳຄິດວ່າປື້ມເຫລັ້ມນີ້ຈະເປັນບ່ອນອີງໃຫ້ແກ່ຜູ້ຮ່ວມງານ ແລະ ເຄືອຄ່າຍໃນການເຮັດວຽກ "ອ.ຣ.ພ" ໃຫ້ໄດ້ດີຂຶ້ນກວ່າເກົ່າ.

ພ້ອມກັນນີ້ຄະນະຈັດທຳຕ້ອງຂໍອະໄພໃນສິ່ງທີ່ຂາດຕົກບົກຜ່ອງ ແລະ ຍິນດີຮັບຄຳຕຳນິຕິຊົມຈາກທຸກໆທ່ານ.

ຄະນະຈັດທຳ

## ສາລະບານ

ຫົວບົດ ໜ້າ

1. ຄວາມໝາຍຂອງ “ ອ.ຮ.ພ ”……………………….1
2. ການຈັດແບ່ງຮຸ່ນ "ອ.ຮ.ພ ”…………………..……..2
3. ຈຸດປະສົງໃນການຈັດກິດຈະກຳ "ອ.ຮ.ພ”……..…….3
4. ວິທີການເຝິກ "ອ.ຮ.ພ”……………………………….4
5. ກິດຈະກຳຫລັກທີ່ເຄື່ອນໄຫວ……………………….5
6. ຜົນໄດ້ຮັບ…………………………………………6
7. ຄຸນລັກສະນະທີ່ດີຂອງ "ອ.ຮ.ພ”………………….....7
8. ໜ້າທີ່ຂອງ "ອ.ຮ.ພ”…………………………….....8
9. ການຄັດເລືອກສະມາຊິກ "ອ.ຮ.ພ”………………....9
10. ການຈັດລະບົບໝວດໝູ່ຂອງ"ອ.ຮ.ພ”……….....10
11. ກົດລະບຽບຂອງ "ອ.ຮ.ພ”……………………....11
12. ກົດລະບຽບຂອງ "ອ.ຮ.ພ” ຮຸ່ນນ້ອຍ, ຮຸ່ນກາງ, ຮຸ່ນໃຫຍ່………………………………………..12
13. ຄະຕິຂອງ ອ.ຮ.ພ……………………………….13
14. ຄຳປະຕິຍານຂອງ "ອ.ຮ.ພ”………..………….14
15. ຮູບກິດຈະກຳຕ່າງໆ……………………….15-16



## ຄຳຂວັນຂອງ
## “ອ.ຮ.ພ”

ເດັກອາສາຮຸ່ນໃຫຍ່ ແລະ ຮຸ່ນກາງ:

ຄຳຂວັນ:“ ສ້າງຄວາມດີຢ່າງໜ້ອຍມື້ລະທື່ອ”




ເດັກອາສາຮຸ່ນນ້ອຍ:

ຄຳຂວັນ: “ ສ້າງຄວາມດີທຸກໆວັນ ”



## II. ກົດລະບຽບຂອງຮຸ່ນນ້ອຍ (ປະຖົມ) ມີ 6 ຂໍ້.

1. ນັບຖື ແລະ ເຊື່ອຟັງຜູ້ໃຫຍ່.
2. ບໍ່ເຫັນແກ່ຕົວ.
3. ບໍ່ຂີ້ຕົວະ.
4. ສະອາດ ແລະ ເປັນລະບຽບ.
5. ສຸພາບອ່ອນໂຍນ
6. ເມດຕາຕໍ່ສັດ ແລະ ຮັກສິ່ງແວດລ້ອມ.

## ຄະຕິຂອງ "ອ.ຮ.ພ"

ເດັກອາສາຮຸ່ນໃຫຍ່ ແລະ ຮຸ່ນກາງ:

ຄະຕິ: " ກຽມພ້ອມສະເໝີ "

ເດັກອາສາຮຸ່ນນ້ອຍ:

ຄະຕິ: " ຊ່ວຍຜູ້ອື່ນສະເໝີ "



## ຄວາມໝາຍຂອງ "ອ.ຮ.ພ"

ຊື່ເຕັມ: ອາສາສະໝັກຮ່ວມພັດທະນາເພື່ອນຊ່ວຍເພື່ອນຕ້ານສິ່ງເສບຕິດໃນໂຮງຮຽນ

ຊື່ຫຍໍ້: " ອ.ຮ.ພ "

- ອ.ຮ.ພ ໝາຍເຖິງເດັກທີ່ໄດ້ເຝິກຝົນຕົນເອງໃຫ້ເປັນເດັກດີ, ມີຄວາມຮູ້ຄວາມສາມາດ, ກ້າສະແດງອອກໃນທາງທີ່ຖືກຕ້ອງ, ສາມາດເປັນຜູ້ນຳພາກິດຈະກຳໄດ້ (ສອນຜູ້ອື່ນໄດ້).

- ການເປັນຄົນດີຕ້ອງເລີ່ມຕົ້ນຈາກການເປັນເດັກດີຂອງພໍ່ແມ່ ແລະ ຄອບຄົວ, ຮູ້ຈັກແບ່ງເວລາ ແລະ ໃຊ້ເວລາໃຫ້ເປັນປະໂຫຍດ, ກຽມພ້ອມຕົນເອງໃຫ້ສາມາດຊ່ວຍເຫຼືອຜູ້ອື່ນ ແລະ ຊຸມຊົນຢູ່ສະເໝີ.

# ການຈັດແບ່ງຮຸ່ນ " ອ.ຮ.ພ "

## ກຸ່ມເດັກ ອ.ຮ.ພ ມີຢູ່ 3 ຮຸ່ນ

1. ຮຸ່ນນ້ອຍ (ຊັ້ນປະຖົມ) ອາຍຸລະຫວ່າງ 6 – 10 ປີ.
2. ຮຸ່ນກາງ (ຊັ້ນມັດທະຍົມຕົ້ນ) ອາຍຸລະຫວ່າງ 11 – 15 ປີ.
3. ຮຸ່ນໃຫຍ່ (ຊັ້ນມັດທະຍົມປາຍ) ອາຍຸລະຫວ່າງ 16 – 18 ປີ.

## ເປົ້າໝາຍ

ສ້າງເດັກ
ໃຫ້ເກັ່ງ, ດີ, ມີປະໂຫຍດແກ່ສັງຄົມ





# ກົດລະບຽບຂອງ "ອ.ຮ.ພ"

I. ກົດລະບຽບຮຸ່ນກາງ ແລະ ຮຸ່ນໃຫຍ່ມີ 10 ຂໍ້.
   1. ປະຕິບັດຕົນໃຫ້ເປັນທີ່ເຊື່ອຖື ແລະ ໄວ້ວາງໃຈໄດ້.
   2. ສັດຊື່.
   3. ປະຕິບັດຕົນໃຫ້ເປັນປະໂຫຍດ ແລະ ຊ່ວຍເຫຼືອຜູ້ອື່ນສະເໝີ.
   4. ເປັນມິດກັບຄົນທັງຫຼາຍ ແລະ ຖືເປັນອ້າຍເປັນນ້ອງກັນ.
   5. ສຸພາບອ່ອນໂຍນ.
   6. ມີຄວາມເມດຕາກະລຸນາ ແລະ ຮັກສິ່ງແວດລ້ອມ.
   7. ເຊື່ອ ແລະ ປະຕິບັດຕາມຄຳສັ່ງຂອງຄູເຝິກ.
   8. ອົດທົນຕໍ່ຄວາມຍາກລຳບາກດ້ວຍໃຈເບີກບານ.
   9. ປະຢັດ
   10. ສຸດຈະລິດທາງກາຍວາຈາໃຈ

# ການຈັດລະບົບໝວດໝູ່ ຂອງ "ອ.ຮ.ພ"

1. ເດັກອາສາຮຸ່ນນ້ອຍ (ຊັ້ນປະຖົມ) ອາຍຸ 6 – 10 ປີ ,1 ໝວດມີ 24 ຄົນ (ຍິງ 12ຄົນ) ແບ່ງເປັນ 4 ໝູ່ / ໝູ່ລະ 6 ຄົນ ຍິງ 3 ຄົນ.
2. ເດັກອາສາຮຸ່ນກາງ (ຊັ້ນມໍຕົ້ນ) ອາຍຸ 11 – 15 ປີ ,1 ໝວດມີ 32 ຄົນ ( ຍິງ 16 ຄົນ) ແບ່ງເປັນ 4 ໝູ່ / ໝູ່ລະ 8 ຄົນ. ຍິງ 4ຄົນ.
3. ເດັກອາສາຮຸ່ນໃຫຍ່ (ຊັ້ນມໍປາຍ) ອາຍຸ 16 – 18 ປີ 1 ໝວດມີ 32 ຄົນ ( ຍິງ 16 ຄົນ) ແບ່ງເປັນ 4 ໝູ່ / ໝູ່ລະ 8 ຄົນ ຍິງ 4 ຄົນ.



# ຈຸດປະສົງ:

- ເພື່ອໃຫ້ເດັກໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ.
- ເພື່ອຝຶກທັກສະທາງດ້ານການນໍາພາ.
- ເພື່ອໃຫ້ເດັກມີທັກສະຊີວິດ: ສິ່ງເສບຕິດ, ສິ່ງແວດລ້ອມ, ເອດສ໌, ການຄ້າມະນຸດ ແລະ ອື່ນໆ
- ເພື່ອສ້າງທັດສະນະຄະຕິໃນການເປັນອາສາສະໝັກ ແລະ ການພັດທະນາຊຸມຊົນ.



## ວິທີການເຝິກ:

- ຍຶດຖືກົດລະບຽບ, ຄະຕິ, ຄຳຂວັນ ແລະ ຄຳປະຕິຍານ.
- ໃຊ້ລະບົບໝວດໝູ່.
- ການປະຕິບັດຕົວຈິງ.
- ເນັ້ນເອົາເດັກເປັນໃຈກາງ.
- ບໍລິການຊຸມຊົນ.
- ເຝິກການພັດທະນາຄວາມກ້າວໜ້າຂຶ້ນເລື້ອຍໆ.





## ການຄັດເລືອກສະມາຊິກ “ອ.ຣ.ພ”

ຜູ້ຈະຄັດເລືອກເປັນສະມາຊິກ ”ອ.ຣ.ພ” ຕ້ອງມີເງື່ອນໄຂດັ່ງນີ້:

1. ມີຄວາມສະໝັກໃຈ ແລະ ຕ້ອງຜ່ານການອະນຸຍາດເຫັນດີເຫັນພ້ອມຈາກຜູ້ປົກຄອງ.
2. ມີຄວາມສົນໃຈ, ກະຕືລືລົ້ນ, ກ້າສະແດງອອກ ແລະ ຫ້າວຫັນວ່ອງໄວ.
3. ຮັກການອ່ານ, ການຂຽນ.
4. ມີນ້ຳໃຈເສຍສະຫລະ, ເອື້ອເຟື້ອເພື່ອແຜ່.
5. ມີຄວາມຮັບຜິດຊອບຕໍ່ວຽກງານທີ່ຖືກມອບໝາຍ.
6. ສຸພາບອ່ອນໂຍນ, ມີມະນຸດສຳພັນດີ.
7. ມີເວລາເຄື່ອນໄຫວວຽກງານຕາມຕາຕະລາງເຄື່ອນໄຫວຂອງສະມາຊິກ “ອ.ຣ.ພ”.
8. ມີພອນສະຫວັນດ້ານໃດດ້ານໜຶ່ງເຊັ່ນ: ກິລາ, ສິລະປະ, ຫັດຖະກຳ ແລະ ອື່ນໆ
9. ສຸຂະພາບແຂງແຮງດີ.

# ໜ້າທີ່ຂອງ "ອ.ຮ.ພ"

1. ມີໜ້າທີ່ຊ່ວຍເຫລືອຜູ້ອື່ນ ( ໝູ່ຄູ່ ພໍ່ແມ່, ຄູອາຈານ ).
2. ມີໜ້າທີ່ພັດທະນາຕົນເອງໃຫ້ມີຄວາມຮູ້ຄວາມສາມາດ ( ທັກສະຕ່າງໆ ).
3. ມີໜ້າທີ່ຊ່ວຍເຫລືອສັງຄົມ: ໂຄສະນາເຜີຍແຜ່, ປູກຈິດສຳນຶກ...





# ກິດຈະກຳຫລັກທີ່ເຄື່ອນໄຫວ

- ອົບຮົມໃນຊົ່ວໂມງກິດຈະກຳ (ຈັນ-ສຸກ) ຕາມຫລັກສູດ, ເດືອນໜຶ່ງ 4 ຄັ້ງ (4-6ຊົ່ວໂມງ).
- ຕັ້ງຄ້າຍເຝິກຝົນ (Daycamp, Camping) (ເສົາ-ອາທິດ).
- ບໍລິການຊຸມຊົນ (Day camp, Camping).
- ທັດສະນະສຶກສາທັງພາຍໃນ ແລະ ຕ່າງປະເທດ.
- ຈັດນິທັດສະການ ແລະງານພົບປະແລກປ່ຽນກິດຈະກຳ.



## ຜົນໄດ້ຮັບ

- ເດັກອາສາສາມາດຊ່ວຍເຫລືອຕົນເອງ ແລະ ໝູ່ຄູ່
- ເດັກຮູ້ໃຊ້ເວລາຫວ່າງໃຫ້ເປັນປະໂຫຍດຫລາຍຂື້ນ.
- ເດັກສາມາດຊ່ວຍວຽກຄອບຄົວ, ໂຮງຮຽນ ແລະ ຊຸມຊົນໄດ້.
- ເດັກອາສາມີທັກສະໃນການປ້ອງກັນຕົວເອງຈາກສິ່ງເສບຕິດ, ເອດສ໌, ສິ່ງແວດລ້ອມ ແລະການຄ້າມະນຸດ.
- ເດັກອາສາສາມາດເປັນຜູ້ນໍາພາກິດຈະກໍາໃນໂຮງຮຽນ, ບ້ານ ແລະ ຊຸມຊົນໄດ້.



## ຄຸນລັກສະນະທີ່ດີຂອງ “ອ.ຮ.ພ”

1. ມີຄວາມສະໝັກໃຈຢາກເຮັດວຽກໂດຍບໍ່ໄດ້ຖືກບັງຄັບ.
2. ມີຄວາມກະຕືລືລົ້ນໃນການພັດທະນາຕົນເອງ ແລະ ປະເທດຊາດ.
3. ເປີດໃຈ, ຈິງໃຈຮັບເອົາຄໍາຕໍານິສິ່ງຂ່າວຈາກຜູ້ອື່ນ.
4. ມະນຸດສໍາພັນດີ.
5. ເສຍສະຫລະ, ອົດທົນ.
6. ມີແນວຄິດລິເລີ່ມ ແລະ ສ້າງສັນ.
7. ກ້າຄິດ, ກ້າເຮັດ, ກ້າສະແດງອອກໃນສິ່ງທີ່ເຫັນວ່າຖືກຕ້ອງແລະເໝາະສົມ.
8. ມີສຸຂະພາບແຂງແຮງດີ.
9. ຫ້າວຫັນ, ວ່ອງໄວ, ຕົງຕໍ່ເວລາ.
10. ມີພອນສະຫວັນດ້ານໃດດ້ານໜຶ່ງ.